ສະບັບ
ເດືອນເມ

# ເຖິງຄົນຕ່າງປະເທດທີ່ຂຶ້ນທະບຽນເປັນຜູ້ຢູ່ອາໄສໃນປະເທດຍີ່ປຸ່ນ
# ຂໍ້ມູນກ່ຽວກັບໝາຍເລກບຸກຄົນ (ໝາຍເລກຂອງຂ້ອຍ)

ພາສາລາວ

ເລີ່ມແຕ່ເດືອນມັງກອນ 2016 ເປັນຕົ້ນໄປ, ເລກປະກັນສັງຄົມ ແລະ ເລກປະຈຳຕົວເສຍພາສີ (ເອີ້ນອີກຊື່ໜຶ່ງວ່າ ເລກປະຈຳຕົວບຸກຄົນ ຫຼື "ໝາຍເລກຂອງຂ້ອຍ") ແມ່ນໄດ້ຖືກນຳໃຊ້ຢູ່ໃນຂົງເຂດປະກັນສັງຄົມ, ພາສີ ແລະ ການໂຕ້ຕອບໄພພິບັດ.

## 1. ເລກປະຈຳຕົວບຸກຄົນແມ່ນຫຍັງ?

ເລກປະຈຳຕົວບຸກຄົນ (ເອີ້ນຊື່ຫຼີ້ນວ່າ "ໝາຍເລກຂອງຂ້ອຍ") ແມ່ນເລກ 12 ຕົວທີ່ກຳນົດໃຫ້ກັບບຸກຄົນຕ່າງໆທີ່ດຳລົງຊີວິດຢູ່ໃນປະເທດຍີ່ປຸ່ນພາຍໃຕ້ລະບົບເລກປະກັນສັງຄົມ ແລະ ເລກປະຈຳຕົວຜູ້ເສຍພາສີ. ພວກມັນຖືກນຳໃຊ້ຢູ່ໃນຂົງເຂດປະກັນສັງຄົມ, ພາສີ ແລະ ການໂຕ້ຕອບໄພພິບັດ. ລະບົບໃຊ້ເປັນພື້ນຖານໂຄງລ່າງທາງສັງຄົມ ເພື່ອເພີ່ມຄວາມໂປ່ງໃສທາງດ້ານການບໍລິຫານ, ນຳເອົາຄວາມສະດວກສະບາຍອັນໃຫຍ່ຫຼວງມາໃຫ້ສັງຄົມ, ແລະ ສ້າງສັງຄົມທີ່ເປັນທຳ ແລະ ຍຸຕິທຳ.

ຄົນຕ່າງປະເທດທີ່ຂຶ້ນທະບຽນເປັນຜູ້ຢູ່ອາໄສໃນປະເທດຍີ່ປຸ່ນ (ຜູ້ຢູ່ອາໄສໄລຍະກາງ, ຜູ້ຢູ່ອາໄສຖາວອນພິເສດ, ອື່ນໆ) ຈະໄດ້ຮັບເລກປະຈຳຕົວບຸກຄົນຄືກັນ.

## 2. ການແຈ້ງເລກປະຈຳຕົວບຸກຄົນ

- ◆ ຖ້າທ່ານຂຶ້ນທະບຽນເປັນຜູ້ຢູ່ອາໄສຢູ່ໃນປະເທດຍີ່ປຸ່ນ, ເລກປະຈຳຕົວບຸກຄົນຂອງທ່ານແມ່ນໄດ້ພິມໄວ້ຢູ່ໃນບັດແຈ້ງທີ່ທ່ານໄດ້ຮັບຈາກຫ້ອງການເທດສະບານຕາມທີ່ຢູ່ທີ່ທ່ານລົງທະບຽນໄວ້.
(ບັດແຈ້ງຈະບໍ່ໝົດອາຍຸ. ຢ່າໂຍນບັດແຈ້ງຂອງທ່ານຖິ້ມໄປ. ທ່ານຕ້ອງເກັບຮັກສາມັນໄວ້ເປັນຢ່າງດີ.)
- ◆ ຄົນຕ່າງປະເທດຜູ້ທີ່ເຂົ້າມາປະເທດຍີ່ປຸ່ນດ້ວຍການມີສະຖານະເປັນຜູ້ຢູ່ອາໄສໄລຍະກາງ-ໄລຍະຍາວຈະໄດ້ຮັບເລກປະຈຳຕົວບຸກຄົນໃນເວລາຂຶ້ນທະບຽນເປັນຜູ້ຢູ່ອາໄສ.

## 3. ຈະນຳໃຊ້ເລກປະຈຳຕົວບຸກຄົນເມື່ອໃດ

- ◆ ທ່ານຈະໄດ້ສະແດງເລກປະຈຳຕົວບຸກຄົນຂອງທ່ານກັບເຈົ້າໜ້າທີ່ພາສີສຳລັບຂັ້ນຕອນດຳເນີນການເສຍພາສີ, ເຊັ່ນ: ເມື່ອຍື່ນເສຍພາສີຂອງທ່ານສຳລັບປີ 2016 ຂຶ້ນໄປ.
- ◆ ທ່ານຈະໄດ້ສະແດງເລກປະຈຳຕົວບຸກຄົນຂອງທ່ານກັບນາຍຈ້າງຂອງທ່ານ ເພື່ອນຳໃຊ້ສຳລັບຂັ້ນຕອນດຳເນີນການປະກັນສັງຄົມ ແລະ ເສຍພາສີ.
- ◆ ທ່ານຈະຕ້ອງສະແດງເລກປະຈຳຕົວບຸກຄົນຂອງທ່ານໃຫ້ກັບບໍລິສັດຫຼັກຊັບ ແລະ ບໍລິສັດປະກັນໄພຕ່າງໆສຳລັບຂັ້ນຕອນດຳເນີນການພາສີ.
- ◆ ທ່ານຈະໄດ້ສະແດງເລກປະຈຳຕົວບຸກຄົນຂອງທ່ານກັບຫ້ອງການເທດສະບານຂອງທ່ານ ເພື່ອຮັບເງິນສະຫວັດດີການ ແລະ ສຳລັບຂັ້ນຕອນດຳເນີນການຕ່າງໆພາຍໃຕ້ປະກັນໄພສຸຂະພາບແຫ່ງຊາດ ແລະ ໂຄງການປະກັນໄພການເບີ່ງແຍງດູແລ.
- ◆ ທ່ານຈະໄດ້ສະແດງເລກປະຈຳຕົວບຸກຄົນຂອງທ່ານກັບທະນາຄານ ຫຼື ຫ້ອງການໄປສະນີ ເມື່ອສົ່ງເງິນໄປຕ່າງປະເທດ ຫຼື ຮັບເງິນມາຈາກຕ່າງປະເທດ.

ໝາຍເຫດ: ຢູ່ໃນຂັ້ນຕອນດຳເນີນການຂ້າງເທິງນັ້ນ, ອົງການຮັບຜິດຊອບເລກປະຈຳຕົວບຸກຄົນຂອງທ່ານຈະປ້ອງກັນການປອມແປງຂໍ້ມູນປະຈຳຕົວໂດຍການຢືນຢັນ (1) ການນຳໃຊ້ໄດ້ຂອງຕົວເລກ ແລະ (2) ຂໍ້ມູນປະຈຳຕົວຂອງຜູ້ຖື.

ເນື່ອງຈາກວ່າ ບັດແຈ້ງສາມາດພິສູດໄດ້ແຕ່ຕົວເລກເທົ່ານັ້ນ, ທ່ານຈະຕ້ອງໄດ້ສະແດງເລກປະຈຳຕົວ (ID) ຂອງທ່ານນຳ (ຕົວຢ່າງ: ບັດຢູ່ອາໄສ, ໃບຢັ້ງຢືນທີ່ຢູ່ອາໄສຖາວອນພິເສດ).

## 4. ບັດເລກປະຈຳຕົວບຸກຄົນ (ບັດໝາຍເລກຂອງຂ້ອຍ) ແມ່ນຫຍັງ?

- ບັດນີ້ພິສູດທັງເລກປະຈຳຕົວບຸກຄົນ ແລະ ຂໍ້ມູນປະຈຳຕົວຂອງທ່ານຢູ່ໃນຂັ້ນຕອນໃດໜຶ່ງກ່ຽວຂ້ອງກັບເລກປະຈຳຕົວບຸກຄົນ. ມັນຍັງໃຊ້ເປັນບັດປະຈຳຕົວທາງການຂອງທ່ານນຳອີກ.
- ທ່ານສາມາດສະໝັກຂໍເລກປະຈຳຕົວບຸກຄົນໄດ້. ມີທາງເລືອກການສະໝັກຂໍໃຫ້ຢູ່ຫຼາຍທາງເຊັ່ນ: ໂດຍການສົ່ງໃບຄຳຮ້ອງ (ທີ່ໄດ້ຮັບພ້ອມກັບບັດແຈ້ງຂອງທ່ານ) ພ້ອມຕິດຮູບຂອງທ່ານກັບຄືນໂດຍທາງໄປສະນີ, ຫຼື ໂດຍການສະໝັກທາງອອນລາຍຜ່ານຄອມພິວເຕີ ຫຼື ໂທລະສັບສະມາດໂຟນ. ການອອກບັດໃຫ້ເທື່ອທຳອິດແມ່ນຈະບໍ່ໄດ້ຈ່າຍເງິນ.
- ເມື່ອທ່ານສະໝັກຂໍບັດເລກປະຈຳຕົວບຸກຄົນແລ້ວ, ທ່ານຈະໄດ້ຮັບບັດໄປສະນີບອກໃຫ້ຮູ້ວ່າ ບັດຂອງທ່ານແມ່ນພ້ອມອອກໃຫ້ແລ້ວ. ທ່ານສາມາດໄປຮັບບັດຂອງທ່ານໄດ້ຢູ່ທີ່ຫ້ອງການເທດສະບານ ໂດຍການເອົາ (1) ບັດໄປສະນີນີ້, (2) ບັດແຈ້ງຂອງທ່ານ, ແລະ0 (3) ລະຫັດ (ID) ປະຈຳຕົວຂອງທ່ານ (ບັດຢູ່ອາໄສ, ອື່ນໆ) ໄປນຳ. ທ່ານຈຳເປັນຕ້ອງໄດ້ຕັ້ງເລກລະຫັດປະຈຳຕົວໃນເວລາອອກເລກປະຈຳຕົວບຸກຄົນໃຫ້.
- ບັດເລກປະຈຳຕົວບຸກຄົນຂອງທ່ານໃຊ້ໄດ້ຈົນຮອດວັນຄົບຮອບວັນເກີດຄັ້ງທີສິບ ຫຼັງຈາກອອກບັດໃຫ້ ຖ້າທ່ານມີອາຍຸ 20 ປີຂຶ້ນໄປ, ຫຼື ຈົນຮອດວັນຄົບຮອບວັນເກີດຄັ້ງທີຫ້າ ຖ້າທ່ານອາຍຸຕ່ຳກວ່າ 20 ປີ. ຈົ່ງໄວ້ວ່າ ວັນໝົດອາຍຸອາດຈະແຕກຕ່າງກັນໄດ້ຂຶ້ນຢູ່ກັບໄລຍະການຢູ່ອາໄສຂອງທ່ານ ຫຼື ເງື່ອນໄຂອື່ນໆນຳ.
- ໃນບັດແມ່ນມີຊິບ IC ຝັງໄວ້ຢູ່ໃນ, ເຊິ່ງສາມາດເກັບໃບຢັ້ງຢືນອີເລັກໂທຣນິກທີ່ໃຊ້ສຳລັບການເສຍພາສີທາງອອນລາຍ ແລະ ການດຳເນີນຂັ້ນຕອນອື່ນໆໄດ້.
- ຢູ່ໃນບາງເທດສະບານ, ຍັງມີການນຳບັດໃຊ້ຮັບການບໍລິການສາທາລະນະນຳອີກ (ຕົວຢ່າງ: ການບໍລິການຫ້ອງສະໝຸດສາທາລະນະ, ການອອກໃບຢັ້ງຢືນການຂຶ້ນທະບຽນທີ່ມີກາຈ່າ) ຫຼື ຮັບເອົາສຳເນົາໃບຢັ້ງຢືນທີ່ຢູ່ຂອງທ່ານຢູ່ທີ່ຮ້ານສະດວກຊື້.
- ຊິບ IC ຈະມີຊື່, ທີ່ຢູ່, ເລກປະຈຳຕົວບຸກຄົນ, ແລະ ຂໍ້ມູນອື່ນໆຂອງທ່ານພີມໄວ້ຢູ່ດ້ານໜ້າຂອງບັດ. ຈະບໍ່ມີການບັນທຶກຂໍ້ມູນສ່ວນຕົວທີ່ລະອຽດອ່ອນໄວ້ເຊັ່ນ: ລາຍຮັບຂອງທ່ານ.
- ເຖິງແມ່ນວ່າ ຫຼັງຈາກທີ່ໄດ້ຮັບບັດເລກປະຈຳຕົວບຸກຄົນແລ້ວ, ທ່ານຍັງຈະຕ້ອງໄດ້ຮັກສາບັດທີ່ຢູ່ອາໄສ, ໃບຢັ້ງຢືນທີ່ຢູ່ຖາວອນພິເສດຂອງທ່ານ, ແລະ ອື່ນໆໄວ້ນຳ.

## 5. ຄຳເຕືອນໃນການຈັດການເລກປະຈຳຕົວບຸກຄົນ

- ເມື່ອທີ່ຢູ່ ຫຼື ຂໍ້ມູນອື່ນທີ່ກ່າວໄວ້ຢູ່ໃນບັດແຈ້ງ ຫຼື ບັດເລກປະຈຳຕົວບຸກຄົນຈຳເປັນຕ້ອງໄດ້ມີການອັບເດດ, ກະລຸນາຕິດຕໍ່ຫາຫ້ອງການເທດສະບານ.
- ບໍ່ອະນຸຍາດໃຫ້ຜູ້ໃດໃຊ້ ຫຼື ເກັບສະສົມເລກປະຈຳຕົວບຸກຄົນ ນອກຈາກວ່າໄດ້ຮັບການອະນຸຍາດຈາກກົດໝາຍ. ເມື່ອຜູ້ອື່ນຖາມເລກປະຈຳຕົວບຸກຄົນຂອງທ່ານ, ໃຫ້ກວດເບິ່ງໃຫ້ແນ່ໃຈວ່າໃຜຈະໃຊ້ມັນ ແລະ ໃຊ້ເພື່ອຈຸດປະສົງຫຍັງ.
- ບຸກຄົນໃດກໍ່ຕາມທີ່ເອົາເລກປະຈຳຕົວຂອງບຸກຄົນອື່ນແບບຜິດກົດໝາຍແມ່ນຈະຖືກລົງໂທດ.
- ຢ່າຫຼົງໄປບອກເລກປະຈຳຕົວບຸກຄົນຂອງທ່ານໃຫ້ຜູ້ອື່ນ, ໂດຍສະເພາະແມ່ນການໂທລະສັບມາຖາມແບບໜ້າສົງໄສ.

## 6. ການສອບຖາມກ່ຽວກັບເລກປະຈຳຕົວບຸກຄົນ

◆ ເບີໂທລະສັບໂທຟຣີແມ່ນມີໃຫ້ເປັນພາສາອັງກິດ, ພາສາຈີນ, ພາສາເກົາຫຼີ, ພາສາສະເປນ ແລະ ພາສາປອກຕຸຍການ

**0120-0178-26　ການສອບຖາມກ່ຽວກັບລະບົບເລກປະກັນສັງຄົມ ແລະ ເລກປະຈຳຕົວເສຍພາສີ**

**0120-0178-27　ການສອບຖາມກ່ຽວກັບບັດແຈ້ງ ແລະ ບັດເລກປະຈຳຕົວບຸກຄົນ**

9:30–20:00 ວັນລັດຖະການ, 9:30–17:30 ວັນເສົາອາທິດ ແລະ ວັນພັກທາງການ (ປິດໃນວັນທ້າຍປີ/ວັນພັກປີໃໝ່)

● ສຳລັບການງົດບັດເລກປະຈຳຕົວບຸກຄົນຂອງທ່ານສຸກເສີນ ເນື່ອງຈາກບັດເສຍ ຫຼື ບັດຖືກລັກ, ໃຫ້ໂທຫາເບີ 0120-0178-27, ເປີດຕະຫຼອດ 24/7.

◆ ຂໍ້ມູນກ່ຽວກັບເລກປະຈຳຕົວບຸກຄົນແມ່ນມີໃຫ້ເປັນຫຼາຍພາສາຢູ່ໃນເວັບໄຊທ໌ຕໍ່ໄປນີ້:

- ກອງເລຂາຫ້ອງການ: http://www.cas.go.jp/jp/seisaku/bangoseido/
- J-LIS: https://www.kojinbango-card.go.jp/

